# Prudential Laos Signs Agreement to Support Chevening Scholarship

# ບໍລິສັດ ພຣູເດັນໂຊລ໌ ລາວ ເຊັນຂໍ້ຕົກລົງໃນການສະໜັບສະໜູນທຶນການສຶກສາ ຊີບເວນນິ້ງ

*July xx, 2021*

Prudential Life Assurance (Lao) Company Limited ("Prudential Laos") and the UK Foreign, Commonwealth and Development Office ("FCDO") signed an agreement to financially support the UK government's Chevening Scholarships Programme this year (2021/2022). This programme offers opportunities for Lao students who are aspiring to become future leaders to study in the UK and uplift their academic path and professional career.

ບໍລິສັດ ພຣູເດັນໂຊລ໌ ປະກັນໄພຊີວິດ (ລາວ) ຈຳກັດ (ພຣູເດັນໂຊລ໌ ລາວ) ແລະ ກະຊວງການຕ່າງປະເທດ ແລະ ການພັດທະນາ ໄດ້ເຊັນຂໍ້ຕົກລົງໃນການສະໜັບສະໜູນທຶນການສຶກສາຊີບເວນນິ້ງຂອງປະເທດອັງກິດ ໃນສົກຮຽນ 2021/2022. ທຶນການສຶກສາທີ່ປະເທດອັງກິດນີ້ຈະມອບໂອກາດໃຫ້ກັບນັກຮຽນລາວໄດ້ເປັນຜູ້ນຳໃນອະນາຄົດ ແລະ ຍົກລະດັບການສຶກສາ ແລະ ອາຊີບການງານ.

The agreement was signed by Veejay Madhavan, Chief Executive Officer of Prudential Laos and H.E. John Pearson, British Ambassador to Laos.

ຂໍ້ຕົກລົງຖືກເຊັນໂດຍ ທ່ານ ວີເຈ ມັດດາວັນ, ຜູ້ອຳນວຍການໃຫຍ່ ພຣູເດັນໂຊລ໌ ລາວ ແລະ ພະນະທ່ານ ຈອນ ເພຍສັນ, ເອກອັກຄະລາດຊະທູດອັງກິດປະຈຳລາວ.

The Prudential Chevening Scholarship for 2021 was awarded to Ms. Sommay Heuankeomany, who will pursue her Master's Degree in Money, Banking, and Central Banking at University of Buckingham. Her dream is to establish a high-quality research centre for monetary policy and financial markets and become a full time professor at the Banking Institute which is under the Bank of Laos. The Banking Institute offers tertiary education in business, finance, and banking.

ທຶນການສຶກສາຊີບເວນນິ້ງສຳລັບປີ 2021 ໄດ້ຖືກມອບໃຫ້ແກ່ ນາງ ສົມໝາຍ ເຮືອງແກ້ວມະນີ ເຊິ່ງຈະສຶກສາຕໍ່ລະດັບປະລິນຍາໂທໃນວິຊາການເງິນ ແລະ ການທະນາຄານທີ່ ມະຫາວິທະຍາໄລ ບັກກິງແຮມພາເລດ ເພື່ອ

ສານຕໍ່ຄວາມຫວັງໃນການກໍ່ຕັ້ງສູນວິໄຈສຳລັບນະໂຍບາຍການເງິນ ແລະ ການຕະຫຼາດການເງິນ ແລະ ເປັນສາດສະດາຈານປະຈຳສະຖາບັນທະນາຄານທີ່ຢູ່ພາຍໃຕ້ທະນາຄານແຫ່ງ ສ.ປ.ປ ລາວ.

Veejay said: “Education is a cornerstone of any society, so we are proud to support the Chevening Programme to provide more academic opportunities for the people of Laos. Prudential’s purpose is to help people get the most out of life. We are pleased to help engage and empower young professionals to pursue quality education and become experts in their chosen fields.”

ທ່ານ ວິເຈໄດ້ກ່າວວ່າ: “ການສຶກສາເປັນພື້ນຖານສຳຄັນສຳລັບສັງຄົມ. ພວກເຮົາຮູ້ສຶກພູມໃຈທີ່ໄດ້ໃຫ້ການສະໜັບສະໜູນທຶນຊິບເວນນິ້ງເພື່ອມອບໂອກາດການສຶກສາໃຫ້ກັບຄົນລາວ. ເປົ້າໝາຍຂອງ ພຣູເດັນໂຊລ໌ ລາວແມ່ນການຊ່ວຍໃຫ້ຜູ້ຄົນໄດ້ຮັບສິ່ງທີ່ດີທີ່ສຸດໃນຊີວິດ ແລະ ພວກເຮົາມີຄວາມຍິນດີໃນການມີສ່ວນຮ່ວມໃນການສົ່ງເສີມຄົນຮຸ່ນໃໝ່ໃຫ້ໄດ້ຮັບການສຶກສາທີ່ມີຄຸນະພາບ ແລະ ກາຍເປັນຜູ້ຊ່ວຍຊານໃນວິຊາທີ່ເລືອກ.”

“Chevening is the British Government’s flagship scholarships programme. In Laos, it has supported a range of people in recent years, including many in key decision making and influential positions. I am delighted that Prudential, as a leading British company in Laos, has decided to continue its very generous support.  I am sure that Ms Sommay will be a credit to both the scholarship programme, and Laos” said John Pearson.

“ຊິບເວນນິ້ງເປັນທຶນການສຶກສາລະດັບລັດຖະບານຂອງປະເທດອັງກິດ. ຢູ່ປະເທດລາວ, ທຶນນີ້ໄດ້ຖືກມອບໃຫ້ກັບຄົນລາວໃນປີທີ່ຜ່ານມາ ເຊິ່ງລວມໄປເຖິງບຸກຄົນທີ່ມີອິດທິພົນໃນສັງຄົມ. ຂ້າພະເຈົ້າມີຄວາມພູມໃຈທີ່ ພຣູເດັນໂຊລ ເຊິ່ງເປັນບໍລິສັດຜູ້ນຳໃນປະເທດລາວ ທີ່ໄດ້ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງ. ຂ້າພະເຈົ້າໝັ້ນໃຈວ່າ ນາງສົມໝາຍຈະເປັນບຸກຄົນສຳຄັນໃນທຶນການສຶກສາ ແລະ ປະເທດລາວ.”

**<u>About Prudential Laos</u>**

Prudential Laos is a wholly owned subsidiary of Prudential Corporation Asia. Prudential Laos opened its representative office in Vientiane in March 2015 and received its operating license from The Ministry of Finance in April 2016. Prudential Laos began business in May 2016 and offers life and health insurance products that meet the protection and savings needs of the Lao people. Currently Prudential Laos distributes products and services through the network of reputable bank partners, direct sales force as well as its mobile application – Pulse by Prudential.

Please visit www.prudential.la for more details on Prudential Laos.

**<u>ກ່ຽວກັບ ພຣູເດັນໂຊລ໌ ລາວ</u>**

ພຣູເດັນໂຊລ໌ ຄໍອອບໂປເຣເຊິນ ເອເຊຍ ເປັນເຈົ້າຂອງ ພຣູເດັນໂຊລ໌ ລາວ ແຕ່ພຽງຜູ້ດຽວ. ພວກເຮົາມີຫ້ອງການຕົວແທນທີ່ນະຄອນຫຼວງວຽງຈັນໃນເດືອນ ມີນາ 2015 ແລະ ໄດ້ຮັບໃບອະນຸຍາດການດໍາເນີນທຸລະກິດຈາກກະຊວງການເງິນໃນເດືອນ ເມສາ 2016 ພຣູເດັນໂຊລ໌ ລາວ ເລີ່ມຕົ້ນທຸລະກິດໃນເດືອນ ພຶດສະພາ 2016 ແລະ ນໍາເອົາຜະລິດຕະພັນປະກັນໄພຊີວິດທີ່ແທດເໝາະກັບ ຄວາມຕ້ອງການໃນການປົກປ້ອງຄຸ້ມຄອງ ແລະ ການສະສົມທຶນຂອງຄົນລາວ. ໃນປະຈຸບັນ, ບໍລິສັດ ພຣູເດັນໂຊລ໌ ລາວ ໄດ້ຈໍາໜ່າຍຜະລິດຕະພັນຜ່ານ ລະບົບທະນາຄານ ທົ່ວປະເທດ, ຜ່ານລະບົບຂາຍກົງ, ລວມໄປເຖິງການຈໍາໜ່າຍຜະລິດຕະພັນຜ່ານເທິງແອບພິເຄເຊິນເພົ້າສ໌ອີກດ້ວຍ.

ທ່ານສາມາດເບິ່ງຂໍ້ມູນເພີ່ມຕື່ມກ່ຽວກັບ ພຣູເດັນໂຊລ໌ ລາວ ທີ່ www.prudential.la

PRUDENTIAL
ພຣູເດັນໂຊລ໌ ປະກັນໄພຊີວິດ

# ບໍລິສັດ ພຣູເດັນໂຊລ໌ ລາວ ເຊັນຂໍ້ຕົກລົງໃນການສະໜັບສະໜູນທຶນການສຶກສາ ຊີບເວນນິ້ງ

*ວັນທີ 28 ກໍລະກົດ 2021*

ບໍລິສັດ ພຣູເດັນໂຊລ໌ ປະກັນໄພຊີວິດ (ລາວ) ຈຳກັດ (ພຣູເດັນໂຊລ໌ ລາວ) ແລະ ກະຊວງການຕ່າງປະເທດ ແລະ ການພັດທະນາ ໄດ້ເຊັນຂໍ້ຕົກລົງໃນການສະໜັບສະໜູນທຶນການສຶກສາຊີບເວນນິ້ງຂອງປະເທດອັງກິດໃນສົກຮຽນ 2021/2022. ທຶນການສຶກສາທີ່ປະເທດອັງກິດນີ້ຈະມອບໂອກາດໃຫ້ກັບນັກຮຽນລາວໄດ້ເປັນຜູ້ນຳໃນອະນາຄົດ ແລະ ຍົກລະດັບການສຶກສາ ແລະ ອາຊີບການງານ.

ຂໍ້ຕົກລົງຖືກເຊັນໂດຍ ທ່ານ ວິເຈ ມັດດາວັນ, ຜູ້ອຳນວຍການໃຫຍ່ ພຣູເດັນໂຊລ໌ ລາວ ແລະ ພະນະທ່ານ ຈອນ ເພຍສັນ, ເອກອັກຄະລັດຖະທູດອັງກິດປະຈຳລາວ.

ທຶນການສຶກສາຊີບເວນນິ້ງສຳລັບປີ 2021 ໄດ້ຖືກມອບໃຫ້ແກ່ ນາງ ສົມໝາຍ ເຮືອງແກ້ວມະນີ ເຊິ່ງຈະສຶກສາຕໍ່ລະດັບປະລິນຍາໂທໃນວິຊາການເງິນ ແລະ ການທະນາຄານທີ່ ມະຫາວິທະຍາໄລ ບັກກິງແຮມພາເລດ ເພື່ອສານຕໍ່ຄວາມຫວັງໃນການກໍ່ຕັ້ງສູນວິໄຈສຳລັບນະໂຍບາຍການເງິນ ແລະ ການຕະຫຼາດການເງິນ ແລະ ເປັນສາດສະດາຈານປະຈຳສະຖາບັນທະນາຄານທີ່ຢູ່ພາຍໃຕ້ທະນາຄານແຫ່ງ ສ.ປ.ປ ລາວ.

ທ່ານ ວິເຈໄດ້ກ່າວວ່າ: "ການສຶກສາເປັນພື້ນຖານສຳຄັນສຳລັບສັງຄົມ. ພວກເຮົາຮູ້ສຶກພູມໃຈທີ່ໄດ້ໃຫ້ການສະໜັບສະໜູນທຶນຊີບເວນນິ້ງເພື່ອມອບໂອກາດການສຶກສາໃຫ້ກັບຄົນລາວ. ເປົ້າໝາຍຂອງ ພຣູເດັນໂຊລ໌ ລາວ ແມ່ນການຊ່ວຍໃຫ້ຜູ້ຄົນໄດ້ຮັບສິ່ງທີ່ດີທີ່ສຸດໃນຊີວິດ ແລະ ພວກເຮົາມີຄວາມຍິນດີໃນການມີສ່ວນຮ່ວມໃນການສົ່ງເສີມຄົນຮຸ່ນໃໝ່ໃຫ້ໄດ້ຮັບການສຶກສາທີ່ມີຄຸນະພາບ ແລະ ກາຍເປັນຜູ້ຊ່ຽວຊານໃນສາຂາວິຊາທີ່ໄດ້ເລືອກ."

"ຊີບເວນນິ້ງເປັນທຶນການສຶກສາລະດັບລັດຖະບານຂອງປະເທດອັງກິດ. ທຶນນີ້ໄດ້ຖືກມອບໃຫ້ກັບຄົນລາວໃນຫຼາຍປີທີ່ຜ່ານມາ ເຊິ່ງລວມໄປເຖິງບຸກຄົນທີ່ມີອິດທິພົນໃນສັງຄົມໃນລາວ. ຂ້າພະເຈົ້າມີຄວາມພູມໃຈທີ່ ພຣູເດັນໂຊລ໌ ເຊິ່ງເປັນບໍລິສັດຜູ້ນຳໃນປະເທດລາວ ທີ່ໄດ້ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງ. ຂ້າພະເຈົ້າໝັ້ນໃຈວ່ານາງສົມໝາຍ ຈະເປັນບຸກຄົນສຳຄັນໃນທຶນການສຶກສາ ແລະ ປະເທດລາວ." ກ່າວໂດຍທ່ານຈອນ ເພຍສັນ.

## ***ກ່ຽວກັບ ພຣູເດັນໂຊລ໌ ລາວ***

ພຣູເດັນໂຊລ໌ ຄໍອອບໂປເຣເຊິນ ເອເຊຍ ເປັນເຈົ້າຂອງ ພຣູເດັນໂຊລ໌ ລາວ ແຕ່ພຽງຜູ້ດຽວ. ພວກເຮົາມີຫ້ອງການຕົວແທນທີ່ນະຄອນຫຼວງວຽງຈັນໃນເດືອນ ມີນາ 2015 ແລະ ໄດ້ຮັບໃບອະນຸຍາດການດຳເນີນທຸລະກິດຈາກກະຊວງການ

PRUDENTIAL
ພຣູເດັນໂຊລ໌ ປະກັນໄພຊີວິດ

ເງິນໃນເດືອນ ເມສາ 2016 ພຣູເດັນໂຊລ໌ ລາວ ເລີ່ມຕົ້ນທຸລະກິດໃນເດືອນ ພຶດສະພາ 2016 ແລະ ນຳເອົາຜະລິດຕະພັນປະກັນໄພຊີວິດທີ່ແທດເໝາະກັບ ຄວາມຕ້ອງການໃນການປົກປ້ອງຄຸ້ມຄອງ ແລະ ການສະສົມທຶນຂອງຄົນລາວ. ໃນປະຈຸບັນ, ບໍລິສັດ ພຣູເດັນໂຊລ໌ ລາວ ໄດ້ຈຳໜ່າຍຜະລິດຕະພັນຜ່ານ ລະບົບທະນາຄານ ທົ່ວປະເທດ, ຜ່ານພະນັກງານຂາຍໂດຍກົງ, ລວມໄປເຖິງການຈຳໜ່າຍຜະລິດຕະພັນຜ່ານເທິງແອບພິເຄເຊິນເພົ້າສ໌ອີກດ້ວຍ.

ທ່ານສາມາດເບິ່ງຂໍ້ມູນເພີ່ມຕື່ມກ່ຽວກັບ ພຣູເດັນໂຊລ໌ ລາວ ທີ່ www.prudential.la